World Vision

# ປຶ້ມເຮັດຂອງຫຼິ້ນ



Australian Aid

ໃນປີ 2020 ອົງການສຸພະນິມິດລາວ ໄດ້ຮັບການສະໜັບສະໜູນຈາກລັດຖະບານ ອົດສະຕາລີ
ໂດຍຜ່ານ ໂຄງການຮ່ວມມືຂອງອົງກອນທີ່ບໍ່ສັງກັດລັດຖະບານໃນປະເທດອົດສະຕາລີ (ANCP)

# ອັນຫ້ອຍ ເຄື່ອນທີ່

ສ້າງແຮງກະຕຸ້ນໃຫ້ເດັກນ້ອຍດ້ວຍສີ ແລະ ຮູບຊົງ
(ອາຍຸ: 0–6 ເດືອນ)



## ຄຳແນະນຳ

- ແຕ້ມຮູບຊົງຕ່າງໆໃສ່ເຈ້ຍ. (ຕົວຢ່າງເຊັ່ນ ຮູບວົງມົນໃສ່ເຈ້ຍສີແດງ, ຮູບສາມຫຼ່ຽມໃສ່ເຈ້ຍສີຟ້າ, ຮູບຈັດຕຸລັດໃສ່ເຈ້ຍສີເຫຼືອງ, ຮູບສີ່ແຈສາກໃສ່ເຈ້ຍສີຂຽວ ແລະ ຮູບຊົງເພັດໃສ່ເຈ້ຍສີສົ້ມ.)
- ຕັດແຕ່ລະຮູບຊົງ ແລະ ຫຼັງຈາກນັ້ນກໍຕັດຮູນ້ອຍໆຢູ່ດ້ານເທິງຂອງແຕ່ລະອັນ.
- ມັດເຊືອກ ຫຼື ໂບສີສົດໃສຜ່ານຮູດັ່ງກ່າວ ແລະ ມັດຮູບຊົງຕ່າງໆໃສ່ແນວຫ້ອຍເຄື່ອງຫຼື ໄມ້ລຽບ. ຫ້ອຍມັນໃຫ້ແໜ້ນເທິງຕຽງນອນ ຫຼື ບ່ອນຫຼິ້ນຂອງເດັກນ້ອຍ, ເພື່ອພວກເຂົາຈະສາມາດເບິ່ງສິ່ງເຫຼົ່ານັ້ນເຄື່ອນໄຫວໄປມາ.
- ອີກທາງໜຶ່ງ, ຫ້ອຍອຸປະກອນຄົວເຮືອນທີ່ປອດໄພ ເຊັ່ນ: ກະຕຸກ, ບ່ວງ, ອັນໜີບເຄື່ອງ, ຈາກໄມ້ ຫຼື ແນວຫ້ອຍເຄື່ອງ.



# ກ່ອງຕັນ

(ອາຍຸ: 6 ເດືອນ – 2 ປີ)




## ການກະກຽມ:

ສະສົມກ່ອງບັນຈຸນົມ ແລະ ນ້ຳໝາກໄມ້ທີ່ວ່າງເປົ່າຫຼາຍອັນ ຫຼື ຜະລິດຕະພັນເຈ້ຍອື່ນໆທີ່ໃກ້ຄຽງກັນ. ເປີດສ່ວນດ້ານເທິງ ແລະ ໃຫ້ແນ່ໃຈວ່າພວກມັນສະອາດ.

## ຄຳແນະນຳ

- ຕັດປາຍ ແລະ ຢັດເຈ້ຍໜັງສືພິມທີ່ມຸ່ນໃສ່.
- ຕິດສົ້ນກ່ອງໃຫ້ແໜ້ນ.
- ຕົບແຕ່ງກ່ອງຂອງທ່ານໂດຍການສີທາພວກມັນ, ແຕ້ມຮູບໃສ່ພວກມັນ ຫຼື ແມ່ນແຕ່ຫໍ່ພວກມັນໃສ່ເຈ້ຍສີ, ເຈ້ຍປະກອບ. ສະແດງໃຫ້ເດັກນ້ອຍເຫັນເຖິງວິທີຢອງກ່ອງໃຫ້ເປັນທ່ອນເມື່ອເຮັດສຳເລັດແລ້ວ.



# ອັນສັ່ນສຽງ

ສັ່ນມັນ

(ອາຍຸ: 6 ເດືອນ – 2 ປີ)



## ຄຳແນະນຳ

- ທຳຄວາມສະອາດກະຕຸກຢາງ ແລະ ເອົາຫີນແຮ່/ໝາກຖົ່ວ ແລະ/ຫຼື ເມັດພືດໃສ່ຂ້າງໃນ (ໃຫ້ໝັ້ນໃຈວ່າກະຕຸກຂອງທ່ານມີຝາອັດ ເພື່ອວ່າລູກຂອງທ່ານຈະບໍ່ໄດ້ເຂົ້າເຖິງວັດສະດຸທີ່ຢູ່ຂ້າງໃນ).
- ປິດກະຕຸກໃຫ້ດີ. ຕົກແຕ່ງກະຕຸກດ້ວຍເຈ້ຍສີສົດໃສ ແລະ/ຫຼື ທາສີ.



# ຫຸ່ນຂອງຫຼິ້ນ

(ອາຍຸ: 1–6 ປີ)

## ການກະກຽມ:

ຖົງຕີນໃຫຍ່ທີ່ສະອາດ, ກະດຸມເສື້ອ, ເຂັມ ແລະ ດ້າຍ ແລະ ບິກເຟີດສີ (ຢາກໃຫ້ໃຊ້ສີແດງສຳລັບປາກ).



## ຄຳແນະນຳ

- ເອົາມືຂອງທ່ານຈົກລົງໃນຖົງຕີນກ່ອນເພື່ອເບິ່ງບ່ອນທີ່ຈະຍິບກະດຸມເສື້ອ ແລະ ຫຼັງຈາກນັ້ນ ກໍຫຍິບກະດຸມ 2 ອັນໃສ່ຖົງຕີນເພື່ອໃຫ້ເປັນຕາ.
- ແຕ້ມປາກ ແລະ ຕົກແຕ່ງຕາມທີ່ຕ້ອງການ.
- ເອົາມືຂອງທ່ານເຂົ້າໄປໃນຫຸ່ນເພື່ອຫຼິ້ນກັບລູກຂອງທ່ານ.
- ວັດສະດຸທີ່ໃຊ້ແທນ: ຖ້າວ່າບໍ່ມີຖົງຕີນ ທ່ານສາມາດໃຊ້ຖົງເຈ້ຍນ້ອຍສີນ້ຳຕານ ແລະ ແຕ້ມຕາ ແລະ ປາກໃສ່ຖົງດ້ວຍບິກເຟີດ.



# ປຶ້ມຮູບພາບ
(ອາຍຸ: 0–6 ປີ)




## ຄຳແນະນຳ

- ຕັດຮູບພາບ, ຮູບຊົງຕ່າງໆ ແລະ ສີຈາກວາລະສານເກົ່າ, ໜັງສືພິມ ຫຼື ແຕ້ມໂດຍທ່ານເອງ. ຕິດກາວ/ຕິດສະກັອດພວກມັນໃສ່ໃນປຶ້ມບັນທຶກທີ່ວ່າງເປົ່າ ຫຼື ບັດບັນທຶກທີ່ວ່າງເປົ່າ ແລະ ສ້າງເປັນໜ້າຕ່າງໆສຳລັບໜັງສືຂອງທ່ານ, ແລ້ວກໍໜີບເຫຼັກຫຍິບເຈ້ຍ ຫຼື ຕິດກາວໜ້າເຫຼົ່ານັ້ນເຂົ້າກັນ.

- ເລີ່ມຕົ້ນດ້ວຍຮູບພາບຂອງສິ່ງຕ່າງໆທີ່ເດັກນ້ອຍຮູ້ຈັກ ເຊັ່ນ: ກະຕຸກ ຫຼື ຖົງຕີນ. ຫຼັງຈາກນັ້ນ ທ່ານສາມາດເຮັດປຶ້ມຮູບພາບກ່ຽວກັບສັດ ຫຼື ສິ່ງທີ່ໜ້າສົນໃຈອື່ນໆ ແລະ ເພີ່ມຄຳສັບ. ເປີດໜ້າເຈ້ຍໄປມາກັບເດັກນ້ອຍ. ບົ່ງຊີ້ສັດທີ່ແຕກຕ່າງກັນຫຼືເຮັດສຽງຂອງສັດ. ຕົວຢ່າງເຊັ່ນ: ເມື່ອທ່ານເຫັນໝູ ທ່ານສາມາດເວົ້າວ່າ "ອູ໊ດ, ອູ໊ດ"

- ສຳລັບເດັກນ້ອຍທີ່ອາຍຸໃຫຍ່ຂຶ້ນ ທ່ານສາມາດປະກອບເລື່ອງລາວທີ່ທ່ານຮູ້ເປັນຢ່າງດີ ຫຼື ສ້າງເລື່ອງລາວຮ່ວມກັນ. ຂໍ້ຄວາມ ຄວນທຳມະດາ ແລະ ຊໍ້າໄປຊໍ້າມາ. ມັນສາມາດເປັນເພງທີ່ທຳມະດາ, ທຳນອງ ຫຼື ເລື່ອງລາວທີ່ຄຸ້ນເຄີຍສຳລັບເດັກນ້ອຍ.



# ຖົງເລກ
(ອາຍຸ: 3–6 ປີ)



## ວັດສະດຸ:

- ເມັດໝາກຖົ່ວໜຶ່ງກຳ – ຢ່າງໜ້ອຍສອງສີທີ່ແຕກຕ່າງກັນ
- ກ້ອນຫີນຂະໜາດນ້ອຍ – ທີ່ມີຮູບຊົງ ແລະ ຂະໜາດທີ່ແຕກຕ່າງກັນ
- ວັດຖຸນ້ອຍໆທີ່ມີຈຳນວນ 10 ຈາກແຕ່ລະຢ່າງ ເຊັ່ນ: ແນວຄັດເຈ້ຍ, ທໍ່ດູດ – ຫຼາຍສີ, ໄມ້ຈີ້ມແຂ້ວ, ຝາອັດກະຕຸກນໍ້າ, ໄມ້ນ້ອຍ, ອັນໜີບເຄື່ອງ
- ສ້າງ ຫຼື ຫາຖົງ ຫຼື ກະຕ່ານ້ອຍໆເພື່ອໃສ່ວັດຖຸ. ເພີ່ມວັດສະດຸທີ່ແນະນຳ ຫຼື ສິ່ງນ້ອຍໆອື່ນໆທີ່ທ່ານມີ.

# ກິດຈະກຳເລກ

(ອາຍຸ: 3–6 ປີ)

* ກິດຈະກຳຂ້າງລຸ່ມແມ່ນຕົວຢ່າງທີ່ເນັ້ນໜັກໃສ່ເລກ 6. ກິດຈະກຳທັງໝົດສາມາດແທນໃຫ້ແກ່ຕົວເລກລະຫວ່າງ 1–10.

## ແນະນຳ #6 ໂດຍໃຊ້ຂັ້ນຕອນ

ວັດສະດຸ: ກະດານດຳສຳລັບຮ່າງກາຍ

- ຂຽນ #6 ໃສ່ກະດານດຳ. ເດັກນ້ອຍຂຽນເລກ 6 ໃນອາກາດ ແລະ ເທິງຫຼັງໝູ່.
- ຊັກຊວນໃຫ້ເດັກນ້ອຍຕົບມື, ທືບຕີນ, ດີດມື, ອື່ນໆ 6 ຄັ້ງໃນແຕ່ລະຮອບ;

## ອອກແບບດ້ວຍ “6”

ວັດສະດຸ: ໄມ້, ປື້ມ, ສໍ

- ນຳໄມ້ 6 ກ້ານຈາກໜັງສືຄະນິດສາດ ແລະ ອອກແບບເປັນຕົວເລກ 6.
- ສ້າງການອອກແບບໃໝ່ໃນເສດເຈ້ຍ ແລະ ຂຽນເລກ 6.

## ຮູບແບບ

- ເອົາ 6ຢ່າງຈາກສາມວັດຖຸ ເຊັ່ນ: ກ້ອນຫີນ, ເປືອກ ແລະ ເມັດພືດ.
- ເຮັດຮູບແບບໂດຍໃຊ້ວັດສະດຸ.



## ຈື່ຕົວເລກ ແລະ ລຳດັບ

- ຜູ້ເບິ່ງແຍງຂຽນເລກ 1, 2, 3, 4, 5 ແລະ 6 ໃສ່ເຈ້ຍ.
- ເດັກນ້ອຍເອົາບັດຕົວເລກ 1, 2, 3, 4, 5, 6 ອອກ ແລະ ໃສ່ພວກມັນໃນລຳດັບທີ່ຖືກຕ້ອງ.
- ຜູ້ເບິ່ງແຍງກວດສອບວ່າ ເດັກນ້ອຍລຽງລຳດັບຖືກຕ້ອງ ຫຼື ບໍ່ ໂດຍຊີ້ໄປທີ່ແຕ່ລະຕົວເລກ ແລະ ເວົ້າມັນອອກມາ.
- ໃຊ້ສິ່ງຂອງນ້ອຍໆຈາກຖົງຄະນິດສາດຂອງທ່ານ (ເປືອກ/ຝາອັດ/ກະດຸມເສື້ອ) ເພື່ອສະແດງວ່າແຕ່ລະອັນແທນໃຫ້ກັບຫຍັງ. ວາງຕົວເລກທີ່ຖືກຕ້ອງຂອງວັດຖຸໃສ່ທາງກ້ອງຂອງແຕ່ລະບັດ.

1 2 3 4 5 6 7 8 9 10

## ຂັ້ນບັນໄດດ້ວຍເລກຫົກ

- ເລືອກບັດຕົວເລກ 1 ຫາ 6.
- ວາງບັດເຫຼົ່ານີ້ຕາມລຳດັບ.
- ເທິງແຕ່ລະຕົວເລກ ໃຫ້ວາງເມັດໝາກຖົ່ວ ຫຼື ຝາອັດກະຕຸກເພື່ອສະແດງຕົວເລກ.
- ສ້າງເມັດໝາກຖົ່ວໃນລັກສະນະທີ່ພວກມັນປະກອບເປັນຂັ້ນໄດຈົນຮອດເລກຫົກ.
- ບັດນີ້ ໃຫ້ເດັກນ້ອຍສ້າງຂັ້ນໄດລົງໃນອີກດ້ານໜຶ່ງ ໂດຍໃຊ້ໝາກຖົ່ວ 5–4–3–2–1.

## ລົດໄຟບວກ ແລະ ລົບ

- ນຳເອົາເຫຼັກຄັດ 6 ອັນ ແລະ ເກາະພວກມັນເຂົ້າກັນຄືກັບລົດໄຟ.
- ບັດນີ້ໃຫ້ສ້າງລົດໄຟໃນຄວາມຍາວທີ່ແຕກຕ່າງກັນ ເຊິ່ງບວກກັນຈົນເຖິງເລກຫົກ. ຕົວຢ່າງເຊັ່ນ ລົດໄຟ 4 ຄັນ + ລົດໄຟ 2 ຄັນ.
- ບັນທຶກສິ່ງເຫຼົ່ານີ້ໃນໜັງສືບັນທຶກຂອງທ່ານ ຫຼື ເທິງກະດານຫີນ. ມີລົດໄຟຈັກຄັນທີ່ສາມາດເຮັດໄດ້?.

## ການເຕັ້ນທວນຄືນ

- ເດັກນ້ອຍຕົບມືໄປຂ້າງໜ້າໃນທຳນອງ 1, 2, 3, 4, 5, 6 ແລະ ຫຼັງຈາກນັ້ນໃຫ້ດີດນິ້ວມື ໃນຂະນະທີ່ພວກເຂົານັບກັບຫຼັງ –6, 5, 4, 3, 2, 1.
- ບັດນີ້ ເດັກນ້ອຍລຸກຂຶ້ນຈາກບ່ອນນັ່ງຂອງພວກເຂົາຢ່າງຊ້າໆ ໂດຍນັບໄປຂ້າງໜ້າ 1–6 ແລະ ຫຼັງຈາກນັ້ນກໍນັ່ງນັບກັບຫຼັງຢ່າງຊ້າໆ 6, 5, 4, 3, 2, 1.
- ໃນທີ່ສຸດ ພວກເຂົາກໍພະຍາຍາມເພີ່ມລະດັບຄວາມໄວດ້ວຍການຕົບມື, ການດີດນິ້ວ, ການລຸກຂຶ້ນ ແລະ ການນັ່ງ, ໂດຍບໍ່ສູນເສຍຄວາມສົມດຸນຂອງພວກເຂົາ ໃນຂະນະທີ່ພວກເຂົາຢືນ ແລະ ນັ່ງ.
- ກິດຈະກຳສຸດທ້າຍເປັນຄືນກັບການເຕັ້ນ. ເດັກນ້ອຍຢືນຂຶ້ນກັບຄູ່ຂອງພວກເຂົາ, ເກາະກຽວມືຂວາເຂົ້າກັນໃນອາກາດ ແລະ ຍ່າງເປັນວົງມົນຢ່າງຊ້າໆ ແລະ ນັບ 1, 2, 3, 4, 5, 6. ເມື່ອພວກເຂົານັບເຖິງ 5, ພວກເຂົາກໍປ່ອຍມືຢ່າງໄວ, ປ່ຽນທິດທາງ, ຕົບມືເບື້ອງຊ້າຍເຂົ້າກັນ ແລະ ຍ່າງ ແລະ ນັບກັບຫຼັງ 6, 5, 4, 3, 2, 1. ເບິ່ງວ່າພວກເຂົາສາມາດເຮັດແບບນີ້ກັບຫຼັງ ແລະ ໄປຂ້າງໜ້າຈົນກວ່າພວກເຂົາຈະສາມາດເຮັດມັນໄດ້ຢ່າງລາບລື່ນໂດຍບໍ່ຫຼົງຈັງຫວະ.



## ແຂ່ງນັບ “6”

ວັດສະດຸ: ໝາກກະລ່ອກ

- ສ້າງເສັ້ນເລີ່ມຕົ້ນ ແລະ ເສັ້ນສິ້ນສຸດ. ບັດນີ້ ທ່ານພ້ອມສຳລັບການແຂ່ງ.
- ເດັກນ້ອຍ ແລະ ສະມາຊິກຄົນອື່ນໃນຄອບຄົວລຽນຄິວກັນທີ່ເສັ້ນເລີ່ມຕົ້ນ. ຜູ້ຫຼິ້ນຄົນທຳອິດໂຍນໝາກກະລ່ອກ ແລະ ໂດດໄປຂ້າງໜ້າຫຼາຍຄັ້ງ ໃນຂະນະທີ່ນັບສຽງດັງ ເຊັ່ນ: ເດັກນ້ອຍໂຍນໄດ້ 4, ພວກເຂົາກໍໂດດໄປຂ້າງໜ້າສີ່ຄັ້ງ ໂດຍນັບ ‘1, 2, 3, 4’
- ສະມາຊິກຂອງຄອບຄົວແຕ່ລະຄົນຈະໄດ້ປ່ຽນຜຽນ.
- ເຮັດຊ້ຳໆຈົນກວ່າຜູ້ໃດຜູ້ໜຶ່ງໄປເຖິງເສັ້ນສິ້ນສຸດ.
- ຄົນທຳອິດທີ່ຈະໄປເຖິງເສັ້ນສິ້ນສຸດເປັນຜູ້ຊະນະ.



## ຮູບຊົງ

- ສຳລັບເດັກນ້ອຍ 3 ຄົນ ສາມາດກໍ່ເປັນຮູບສາມຫຼ່ຽມໃນຂະໜາດທີ່ແຕກຕ່າງກັນ. ສຳລັບເດັກນ້ອຍ 4 ຄົນແມ່ນສາມາດກໍ່ເປັນຮູບຈັດຕຸລັດ.
- ນຳເອົາໄມ້ຫີກກ້ານອອກ.
- ເຈົ້າສາມາດສ້າງສາມຫຼ່ຽມໄດ້ຈັກອັນດ້ວຍໄມ້ຫີກກ້ານຂອງເຈົ້າ?
- ເຈົ້າສາມາດໃຊ້ໄມ້ເພື່ອສ້າງສາມຫຼ່ຽມໃຫຍ່ໄດ້ບໍ



## ວິທີການເຮັດໝາກກະລ່ອກ:



- ນຳເອົາທ່ອນໄມ້ທີ່ໜາ ແລະ ຍາວ ແລະ ຕັດມັນອອກເປັນຮູບສີ່ຫຼ່ຽມນ້ອຍ (ປະມານ 2 ຕະລາງ ຊມ).

- ໃຊ້ບິກເຟີດເພື່ອແຕ້ມຕົວເລກຂອງຈຸດ ຕັ້ງແຕ່ໜຶ່ງຫາຫົກໃນແຕ່ລະດ້ານ. ຖ້າມີສອງອັນຕໍ່ເດັກນ້ອຍຄົນໜຶ່ງ, ໃຫ້ສ້າງໝາກກະລ່ອກອັນໜຶ່ງທີ່ມີຈຸດ ແລະ ອີກອັນມີສັນຍາລັກຕົວເລກ.



# ທຸງອັກສອນ

(ອາຍຸ: 3–6 ປີ)






## ການກະກຽມ:

- ເຊືອກ ຫຼື ສາຍ
- ເຈ້ຍ A4 ທີ່ຕັດເຄິ່ງ
- ເຂັມໝຸດເສື້ອຜ້າ, ເຫຼັກຄັດເຈ້ຍ, ເຊືອກສາຍສັ້ນໆ, ບາງສິ່ງເພື່ອຍຶດຕິດຕົວອັກສອນໃສ່ເສັ້ນຍາວ
- ບິກເມີກ, ສໍສີ ຫຼື ສໍສີທຽນ

## ຄຳແນະນຳ

- ໃນເຈ້ຍແຕ່ລະແຜ່ນ, ໃຫ້ຂຽນຕົວອັກສອນໜຶ່ງຕົວ, ໃຫ້ໝັ້ນໃຈທີ່ຈະລວມທັງຕົວອັກສອນພິມໃຫຍ່ ແລະ ຕົວອັກສອນພິມນ້ອຍໃນເຈ້ຍໃບດຽວກັນ.
- ໃຫ້ໝັ້ນໃຈວ່າໄດ້ຂຽນຕົວອັກສອນໃຫຍ່ພໍສຳລັບເດັກນ້ອຍອ່ານຈາກໄລຍະໄກ.
- ຫຼັງຈາກທີ່ເຮັດແບບນີ້ສຳລັບຕົວອັກສອນທັງໝົດ, ໃຫ້ມັດເຊືອກ ຫຼື ສາຍຍາວຂອງທ່ານໃນໜຶ່ງສົ້ນຂອງຫ້ອງ ແລະ ດຶງມັນສູ່ອີກສົ້ນໜຶ່ງຂອງຫ້ອງເພື່ອຍຶດມັນໃຫ້ແໜ້ນ.
- ໃຫ້ໝັ້ນໃຈວ່າ ຈະບໍ່ມັດເຊືອກ ຫຼື ສາຍສູງເກີນໄປ ຈົນເດັກນ້ອຍບໍ່ສາມາດອ່ານມັນໄດ້.
- ເລີ່ມຕົ້ນດ້ວຍຕົວອັກສອນເລີ່ມຕົ້ນ, ຕິດເຈ້ຍສ່ວນນ້ອຍໆ ໂດຍມີຕົວອັກສອນຢູ່ເທິງ ໃສ່ເຊືອກ ຫຼືສາຍຍາວ.
- ເຮັດແບບນີ້ສຳລັບຕົວອັກສອນແຕ່ລະຕົວ, ໃຫ້ໝັ້ນໃຈວ່າມີພື້ນທີ່ວ່າງພໍລະຫວ່າງແຕ່ລະສ່ວນຂອງເຈ້ຍ.

# ທ່ອນສ້າງຮູບຊົງເລຂາຄະນິດ

(ອາຍຸ: 3–6 ປີ)



## ການກະກຽມ:

- ໄມ້ໜາ ຫຼື ເສົາໄມ້
- ເລື່ອຍ/ເຄື່ອງມືເພື່ອຕັດ ແລະ ເຮັດຮູບໄມ້
- ກະດາດຊາຍ/ເຄື່ອງມືເພື່ອເຮັດໃຫ້ໄມ້ທີ່ຫຍາບລຽບຂຶ້ນ
- ສີທາ (ທາງເລືອກ)

## ຄຳແນະນຳ

- ຕັດສ່ວນໄມ້ອອກເປັນຮູບຊົງເລຂະຄະນິດ – ສີ່ຫຼ່ຽມຈັດຕຸລັດ, ສາມຫຼ່ຽມ ແລະ ສີ່ແຈສາກ – ທ່ານສາມາດສ້າງໃຫ້ຫຼາຍເທົ່າໄມ້ຂອງທ່ານສາມາດສະໜອງໄດ້. (ໝາຍເຫດ: ສີ່ແຈສາກແມ່ນຂະໜາດຂອງສີ່ຫຼ່ຽມຈັດຕຸລັດສອງອັນ. ສາມຫຼ່ຽມແມ່ນສ້າງມາຈາກການຕັດສີ່ຫຼ່ຽມຈັດຕຸລັດອອກເປັນສອງສ່ວນໃນແນວອ່ຽງ. ຂະໜາດຂອງສີ່ຫຼ່ຽມຈັດຕຸລັດຄວນເປັນ 5 ຕະລາງ ຊມ; ຂະໜາດຂອງສີ່ແຈສາກຄວນເປັນ 5 ຊມ ຄູນ 10 ຊມ. ສີໄມ້ທຳມະຊາດແມ່ນດີທີ່ສຸດ.)
- ຂັດ ຫຼື ເຮັດໃຫ້ແຕ່ອັນລຽບ ເພື່ອວ່າຈະບໍ່ຂອບທີ່ຫຍາບ.
- ທາສີແຕ່ລະອັນ ໂດຍໃຊ້ສີທີ່ແຕກຕ່າງກັນ (ທາງເລືອກ).
- ເກັບທ່ອນໃສ່ໃນຖົງ ຫຼື ກ່ອງ ເມື່ອບໍ່ໄດ້ນຳໃຊ້.



# ໄມ້ສີ່ຫຼ່ຽມ

(ອາຍຸ: 3–6 ປີ)



## ການກະກຽມ:

- ແປ້ນໄມ້, ໄມ້ຫຼໍ່ ເຊັ່ນ: ຂາໂຕະ, ຖ້ານເກົ່າໆ, ອື່ນໆ
- ເລື່ອຍ/ເຄື່ອງມືເພື່ອຕັດ ແລະ ເຮັດຮູບໄມ້
- ກະດາດຊາຍ/ເຄື່ອງມືເພື່ອເຮັດໃຫ້ໄມ້ທີ່ຫຍາບລຽບຂຶ້ນ
- ສີທາທີ່ບໍ່ເປັນພິດ ຫຼື ບົກເຟີດ

## ຄຳແນະນຳ

- ວັດແທກສ່ວນໄມ້ໃຫ້ເປັນ 2.5 ຕະລາງຊັງຕີແມັດ.
- ຕັດໄມ້ໃຫ້ເປັນ 60 ສ່ວນທັງໝົດ.
- ຂັດ ຫຼື ເຮັດໃຫ້ຂອບລຽບ ເພື່ອວ່າຈະບໍ່ມີສ່ວນທີ່ຫຍາບ.
- ແບ່ງໄມ້ 60 ທ່ອນເປັນ 6 ກຸ່ມໂດຍແຕ່ລະກຸ່ມມີສີ່ຫຼ່ຽມ 10 ອັນ.
- ທາສີທີ່ແຕ່ລະກຸ່ມດ້ວຍສີທີ່ແຕກຕ່າງກັນ: ສີແດງ, ສີຟ້າ, ສີເຫຼືອງ, ສີຂຽວ, ສີມ່ວງ, ສີສົ້ມ, ໃຫ້ແນ່ໃຈວ່າມີ 10 ທ່ອນສຳລັບແຕ່ລະສີ. ເກັບທ່ອນໃສ່ໃນຖົງ ຫຼື ກ່ອງ ເມື່ອບໍ່ໄດ້ນຳໃຊ້.



# ການສະແດງລະຄອນ

(ອາຍຸ: 3–6 ປີ)



## ຄຳແນະນຳ

- ສ້າງເຮືອນຄົວຂະໜາດສຳລັບເດັກນ້ອຍໂດຍໃຊ້ວັດສະດຸທີ່ມີ. ໃຊ້ກ່ອງເຈ້ຍແຂງເພື່ອສ້າງໂຕະ, ເຕົາໄຟ, ຕູ້ເຢັນ ຫຼື ເຄື່ອງຄົວອື່ນທີ່ມີຂະໜາດໃຫຍ່.
- ສ້າງຖ້ານ ຫຼື ຕູ້ ໂດຍໃຊ້ກ່ອງ ຫຼື ຖ້ານໃສ່ປຶ້ມ ແລະ ສະຖານທີ່ຫຼິ້ນໃນສິ່ງເຫຼົ່ານັ້ນ.
- ແຕ້ມໃສ່ກ່ອງ ຫຼື ຜ້າແພເພື່ອເພີ່ມລາຍລະອຽດທີ່ເຮັດໃຫ້ເຮືອນຄົວເບິ່ງຄືເປັນຈິງ.

## ຄຳແນະນຳ

- ສ້າງຕະຫຼາດໂດຍໃຊ້ວັດສະດຸທີ່ມີ. ແຕ້ມໃສ່ກ່ອງ ແລະ ຜ້າແພເພື່ອສ້າງລາຍລະອຽດໃນການເບິ່ງເຫັນ.
- ຈັດວັດສະດຸອື່ນໆໃສ່ຖ້ານ ຫຼື ເທິງໂຕະຕາມຄວາມເໝາະສົມ.

## ຄຳແນະນຳ

- ເກັບເສື້ອຜ້າທັງໝົດໃນກ່ອງໃຫຍ່, ໂດຍແຍກປະເພດລາຍການ (ໝວກໃສ່ກ່ອງໜຶ່ງ, ຜ້າແພຜ້າແພຜືນໃຫຍ່ໃສ່ອີກກ່ອງໜຶ່ງ, ອື່ນໆ)

# ຫົກ ແທັກ ໂທ

(ອາຍຸ: 3–6 ປີ)



## ການກະກຽມ:

- ເຈ້ຍແຂງຂະໜາດປານກາງ 2 ແຜ່ນ
- ບິກ/ສໍ/ບິກເຝີດ
- ໄມ້ບັນທັດ ຫຼື ວັດຖຸຊື່ອື່ນໆ
- ມີດຕັດ

## ຄຳແນະນຳ

- ເອົາສ່ວນໜຶ່ງຂອງເຈ້ຍແຂງ ແລະ ວັດແທກ ແລະ ຕັດມັນອອກ ເພື່ອວ່າມັນຈະເປັນສີ່ຫຼ່ຽມທີ່ມີຂະໜາດປານກາງ, ປະມານ 10 ຊມ ຄູນ 10 ຊມ.
- ໃຊ້ໄມ້ບັນທັດເພື່ອແຕ້ມເສັ້ນລວງຕັ້ງສອງເສັ້ນ ແລະ ເສັ້ນລວງນອນສອງເສັ້ນ ເພື່ອສ້າງຕາໜ່າງທີ່ມີກ່ອງຂະໜາດທີ່ສ່ຳໆກັນ 9 ກ່ອງ
- ດ້ວຍເຈ້ຍສ່ວນອື່ນ, ໃຫ້ຕັດເປັນສີ່ຫຼ່ຽມທີ່ມີຂະໜາດນ້ອຍ 18 ອັນ (ສີ່ຫຼ່ຽມໜຶ່ງອັນ ຄວນສາມາດເຂົ້າໄດ້ໃນໜຶ່ງໃນກ່ອງທີ່ຢູ່ໃນອີກສ່ວນໜຶ່ງຂອງເຈ້ຍແຂງ.
- ໃນສີ່ຫຼ່ຽມນ້ອຍໆອັນທີເກົ້າທີ່ຫາກໍຖືກຕັດອອກ, ໃຫ້ແຕ້ມ 'X' ໂຕໃຫຍ່ໆ ແລະ ໃນອັນທີເກົ້າອີກອັນແມ່ນໃຫ້ແຕ້ມ 'O' ໂຕໃຫຍ່ໆ.

# ບິງໂກສີ

(ອາຍຸ: 3–6 ປີ)



## ການກະກຽມ:

- ເຈ້ຍແຂງຂະໜາດໃຫຍ່
- ເຈ້ຍ 2–4 ແຜ່ນ
- ແຜ່ນເຈ້ຍແຂງຂະໜາດໃຫຍ່
- ບິກເຝີດ/ສໍສີທຽນ/ສໍສີ
- ສະກ໊ອດ
- ໄມ້ບັນທັດ, ສໍໄສ້ສີເທົາ, ຢາງລຶບ
- ມີດຕັດ/ເຄື່ອງຕັດ
- ກາວ
- ຝາອັດກະຕຸກປລາສຕິກ (ສີຟ້າ 16 ອັນ ແລະ ສີສົ້ມ 16 ອັນ)

## ຄຳແນະນຳ

- ແຜ່ນເກມແຕ່ລະແຜ່ນແມ່ນມີສີ່ຫຼ່ຽມຈັດຕຸລັດ 16 ອັນ.
- ຮູບຊົງສີແມ່ນຖືກແຕ້ມໃນຈັດຕຸລັດແຕ່ລະອັນ.
- ແຜ່ນເກມສອງແຜ່ນແມ່ນແຕກຕ່າງໃນລັກສະນະໃດໜຶ່ງ.
- ມີຊຸດບັດສີສຳລັບແຕ່ລະຮູບຊົງ ແລະ ສີ. (ອາດມີສາມຫຼ່ຽມສີຂຽວ, ສາມຫຼ່ຽມສີແດງ, ສາມຫຼ່ຽມສີເຫຼືອງ, ອື່ນໆ ພ້ອມທັງວົງມົນສີສົ້ມ, ວົງມົນສີແດງ, ອື່ນໆ).
- ຄົນໜຶ່ງເປັນຜູ້ເອີ້ນ. ພວກເຂົາປະປົນບັດດັ່ງກ່າວ ແລະ ຈົກໜຶ່ງບັດຈາກຖົງຈັບທີ່ພິເສດ. ພວກເຂົາຮ້ອງສິ່ງທີ່ຢູ່ໃນບັດ.
- ຜູ້ຫຼິ້ນທີ່ມີຮູບຊົງສີນີ້ຈະປົກຄຸມມັນດ້ວຍສັນຍາລັກ.
- ຄົນທຳອິດທີ່ປົກຄຸມແຜ່ນຂອງພວກເຂົາໄດ້ຈະຮ້ອງຂຶ້ນວ່າ 'ບິງໂກ!' ແລະ ຊະນະເກມ.
- ແລ້ວພວກເຂົາຈະເປັນຜູ້ເອີ້ນໃນເກມຕໍ່ໄປ.





# ໂດມິໂນ
(ອາຍຸ: 3–6 ປີ)

## ການກະກຽມ:

- ເຈ້ຍແຂງຂະໜາດໃຫຍ່
- ບິກເຟີດ
- ໄມ້ບັນທັດ, ສໍໄສ້ສີເທົາ, ຢາງລຶບ
- ມີດຕັດ/ເຄື່ອງຕັດ
- ກ້ອນຫີນສາມາດໃຊ້ແທນເຈ້ຍແຂງ



## ຄໍາແນະນໍາ

- ແຕ້ມໂຕະໃນແຜ່ນເຈ້ຍແຂງ ແລະ ແບ່ງມັນອອກເປັນສີ່ແຈສາກນ້ອຍໆ. ສີ່ແຈສາກທັງໝົດຕ້ອງມີຂະໜາດເທົ່າກັນ.
- ແບ່ງສີ່ແຈສາກແຕ່ລະອັນອອກເປັນເຄິ່ງໜຶ່ງດ້ວຍບິກເຟີດ.
- ເຕີ່ມເຕັມແຕ່ລະເຄິ່ງດ້ວຍການປະສົມຈຸດ (ໜຶ່ງຈຸດໃນເຄິ່ງໜຶ່ງ ແລະ ສອງຈຸດໃນອີກເຄິ່ງ, ໜຶ່ງຈຸດໃນເຄິ່ງໜຶ່ງ ແລະ ສາມຈຸດໃນອີກເຄິ່ງ, ໜຶ່ງຈຸດໃນເຄິ່ງໜຶ່ງ ແລະ ສີ່ຈຸດໃນອີກເຄິ່ງໜຶ່ງ, ອື່ນໆ.
- ການປະສົມກັນຕ້ອງອອກມາຈາກໜຶ່ງຈຸດຫາຫົກຈຸດ.
- ນໍາໃຊ້ຊັ້ນສະກັອດໜຽວອ້ອມເຈ້ຍແຂງຢ່າງລະມັດລະວັງ ເພື່ອໃຫ້ມັນຕິດແໜ້ນ ແລະ ຢູ່ໄດ້ດົນ.
- ຕັດສ່ວນໂດມິໂນເຈ້ຍແຂງທັງໝົດດ້ວຍມີດຕັດ ຫຼື ເຄື່ອງຕັດ. ເກັບສ່ວນໂດມິໂນທັງໝົດໄວ້ໃນຖົງນ້ອຍ ເມື່ອບໍ່ໄດ້ນໍາໃຊ້.

